EY
Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີກຳກັບ: 61317474/ 20598948 - LAS

## ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຄະນະບໍລິຫານຂອງ ທະນາຄານ ເມແບັງ ສາຂາໜອງດ້ວງ

*ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ເມແບັງ ສາຂາໜອງດ້ວງ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

*ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍແລະເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

*ບັນຫາອື່ນໆ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2.2 ຂອງເອກະສານລາຍງານການເງິນບົນພື້ນຖານການກະກຽມ, ເຊິ່ງໄດ້ອະທິບາຍເຖິງຈຸດປະສົງຂອງການສະແດງຕົວເລກອ້າງອີງເປັນສະກຸນເງິນໂດລາ ນອກເໜືອຈາກ ພັນກີບ. ຈຳນວນທຽບເທົ່າສະກຸນເງິນໂດລາແມ່ນສະແດງໃນເອກະສານລາຍງານການເງິນທີ່ປະກອບມານຳ ສຳລັບວັດຖຸປະສົງພາຍໃນຂອງສາຂາເທົ່ານັ້ນ ແລະ ບໍ່ຄວນນຳໃຊ້ໃນຈຸດປະສົງອື່ນ.

EY
Building a better working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານຂອງສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບກົດໝາຍວ່າດ້ວຍການການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານ ເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຈົນກວ່າທີ່ທາງຄະນະອຳນວຍການສາຂາ ຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນຫຼືລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານຂອງສາຂາ.

- สะຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາ ໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງສາຂາກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ເອີນ ແອນ ຢັງ ລາວ ຈຳກັດ

Ernst & Young Lao Ltd

ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປລາວ

31 ມີນາ 2019

# ທະນາຄານ ເມແບັງ ສາຂານະຄອນຫຼວງ

ໃບລາຍງານຜົນການດໍາເນີນງານ
ສໍາລັບປີສິ້ນສຸດ ນະວັນທີ 31 ທັນວາ 2018

| ລໍາດັບ | ລາຍການ | ບົດ ອະທິບາຍ ເລກທີ | 2018 ພັນກີບ | 2017 ພັນກີບ | 2018 ທຽບເທົ່າໂດລາ | 2017 ທຽບເທົ່າໂດລາ |
|---|---|---|---|---|---|---|
| A. | **ລາຍຮັບ ແລະ ລາຍຈ່າຍຈາກ ການດໍາເນີນງານ** | | | | | |
| 1. | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | 3 | **4,306,211** | **5,360,725** | **505,127** | **646,962** |
| 1.1 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກທະນາຄານອື່ນ | | 448,783 | 848,364 | 52,643 | 102,385 |
| 1.2 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍກັບຈາກລູກຄ້າ | | 3,857,428 | 4,512,361 | 452,484 | 544,577 |
| 2. | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | 3 | **(454,436)** | **(213,033)** | **(53,306)** | **(25,710)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກທະນາຄານອື່ນ | | (139,332) | - | (16,344) | - |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍໃຫ້ລູກຄ້າ | | (315,104) | (213,033) | (36,962) | (25,710) |
| I. | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | **3,851,775** | **5,147,692** | **451,821** | **621,252** |
| 3 | **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ** | 4 | **244,237** | **186,020** | **28,650** | **22,450** |
| 4 | **ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການ** | 4 | **(5,019)** | **(10,745)** | **(589)** | **(1,297)** |
| 5 | **ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ** | 5 | **(248,709)** | **(107,095)** | **(29,174)** | **(12,925)** |
| II. | **ລາຍຮັບສຸດທິຈາກການ ດໍາເນີນງານ** | | **3,842,284** | **5,215,872** | **450,708** | **629,480** |
| B | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | | | |
| 6 | **ລາຍຮັບຈາກການດໍາເນີນ ງານອື່ນໆ** | 6 | **100,070** | **744,924** | **11,738** | **89,901** |
| 7 | **ລາຍຈ່າຍບໍລິຫານ** | | **(2,308,527)** | **(1,886,738)** | **(270,795)** | **(227,702)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆ ໃຫ້ແກ່ພະນັກງານ | 7 | (1,130,460) | (819,928) | (132,605) | (98,953) |

# ທະນາຄານ ເມແບັງ ສາຂາໜອງດ້ວງ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີສິ້ນສຸດ ນະວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການ* | *ບົດອະທິບາຍເລກທີ* | *2018 ພັນກີບ* | *2017 ພັນກີບ* | *2018 ທຽບເທົ່າໂດລາ* | *2017 ທຽບເທົ່າໂດລາ* |
|---|---|---|---|---|---|---|
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (1,178,067) | (1,066,810) | (138,190) | (128,749) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | **14** | **(1,133,299)** | **(1,982,225)** | **(132,938)** | **(239,226)** |
| **9** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **9** | **(36,999)** | **(804,958)** | **(4,340)** | **(97,146)** |
| **10** | **ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ** | **13.2** | **(8,565,543)** | **-** | **(1,004,756)** | **-** |
| **III.** | **(ຂາດທຶນ)/ກຳໄລທັງໝົດກ່ອນອາກອນ** | | **(8,102,014)** | **1,286,875** | **(950,383)** | **155,307** |
| **11** | **ອາກອນກຳໄລພາຍໃນປີ** | **18.3** | **-** | **-** | **-** | **-** |
| **IV.** | **(ຂາດທຶນ)/ກຳໄລຫຼັງຫັກອາກອນ** | | **(8,102,014)** | **1,286,875** | **(950,383)** | **155,307** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທະນາຄານ ມາເລຍັນເບີຮັດ ສາຂາໜອງດ້ວງ
Malayan Banking Berhad Nongduang Branch

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

31 ມີນາ 2019

# ທະນາຄານ ເມແບັງ ສາຂາໜອງດ້ວງ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2018

| *ລຳດັບ* | *ຊັບສິນ* | *ບົດອະທິບາຍເລກທີ* | *31/12/2018 ພັນກີບ* | *31/12/2017 ພັນກີບ* | *31/12/2018 ທຽບເທົ່າໂດລາ* | *31/12/2017 ທຽບເທົ່າໂດລາ* |
|---|---|---|---|---|---|---|
| **I** | **ເງິນສົດແລະເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **38,763,430** | **56,597,173** | **4,547,030** | **6,830,458** |
| 1 | ເງິນສົດໃນຄັງ | 10 | 2,097,855 | 3,543,478 | 246,083 | 427,646 |
| 2 | ເງິນຝາກຢູ່ ທຫລ | 11 | 36,665,575 | 53,053,695 | 4,300,947 | 6,402,812 |
| **II** | **ເງິນຝາກກັບທະນາຄານອື່ນ** | **12** | **24,332,982** | **8,000,000** | **2,854,308** | **965,484** |
| 1 | ເງິນຝາກກະແສລາຍວັນ | | 332,982 | - | 39,059 | - |
| 2 | ເງິນຝາກມີກຳນົດ | 12 | 24,000,000 | 8,000,000 | 2,815,249 | 965,484 |
| **III** | **ເງິນກູ້ແລະເງິນລ່ວງໜ້າສຳລັບ ລູກຄ້າ, ເງິນແຮສຸດທິສຳລັບ ເງິນກູ້ທີ່ບໍ່ເກີດດອກອອກຜົນ** | **13** | **55,781,712** | **50,946,595** | **6,543,309** | **6,148,515** |
| **IV** | **ຊັບສິນບັດຄົງທີ່** | | **4,487,809** | **5,668,501** | **526,429** | **684,106** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 14.1 | 4,487,809 | 5,506,901 | 526,429 | 664,603 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14.2 | - | 161,600 | - | 19,503 |
| **V** | **ຊັບສິນອື່ນໆ** | | **522,410** | **850,235** | **61,279** | **102,611** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 384,430 | 475,479 | 45,094 | 57,383 |
| 2 | ຊັບສິນອື່ນໆ | 15 | 137,980 | 374,756 | 16,185 | 45,228 |
| | **ຊັບສິນທັງໝົດ** | | **123,888,343** | **122,062,504** | **14,532,355** | **14,731,174** |

# ທະນາຄານເມແບັງ ສາຂາໜອງດ້ວງ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| ລຳ ດັບ | ໜີ້ສິນ ແລະ ທຶນ | ບົດ ອະທິບາຍ ເລກທີ | 31/12/2018 ພັນກີບ | 31/12/2017 ພັນກີບ | 31/12/2018 ທຽບເທົ່າໂດລາ | 31/12/2017 ທຽບເທົ່າໂດລາ |
|---|---|---|---|---|---|---|
| **I** | **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ** | 16 | **8,000,000** | **10,552,398** | **938,416** | **1,273,521** |
| 1 | ເງິນຝາກກະແສລາຍວັນ | | - | 10,552,398 | - | 1,273,521 |
| 2 | ເງິນຝາກມີກຳນົດ | | 8,000,000 | - | 938,416 | - |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 17 | **23,457,097** | **11,048,933** | **2,751,566** | **1,333,446** |
| 1 | ເງິນຝາກກະແສລາຍວັນ | | 2,574,350 | 2,855,615 | 301,977 | 344,631 |
| 2 | ເງິນຝາກປະຢັດ | | 6,561,943 | 5,652,494 | 769,729 | 682,174 |
| 3 | ເງິນຝາກມີກຳນົດ | | 14,320,804 | 2,540,824 | 1,679,860 | 306,641 |
| **III** | **ໜີ້ສິນອື່ນໆ** | | **681,914** | **592,976** | **79,988** | **71,563** |
| 1 | ດອກເບ້ຍຄ້າງຈ່າຍ | | 262,182 | 48,067 | 30,754 | 5,801 |
| 2 | ໜີ້ຕ້ອງສົ່ງອາກອນ | 18.1 | 34,575 | 51,605 | 4,056 | 6,228 |
| 3 | ໜີ້ສິນອື່ນໆ | 19 | 385,157 | 493,304 | 45,178 | 59,535 |
| | **ໜີ້ສິນທັງໝົດ** | | **32,139,011** | **22,194,306** | **3,730,911** | **2,678,531** |
| **IV** | **ທຶນຕົນເອງ ແລະ ຄັງສຳຮອງ** | | | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 20 | 100,121,729 | 100,121,729 | 11,744,484 | 12,083,240 |
| 2 | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | | 237,882 | 254,733 | 27,904 | 30,743 |
| 3 | ກຳໄລສະສົມ | 13.2 | (8,610,279) | (508,265) | (1,010,003) | (61,340) |
| | **ທຶນທັງໝົດ** | | **91,749,332** | **99,868,197** | **10,762,385** | **12,052,643** |
| | **ໜີ້ສິນ ແລະ ທຶນທັງໝົດ** | | **123,888,343** | **122,062,504** | **14,493,296** | **14,731,174** |

# ທະນາຄານ ເມແບັງ ສາຂາຫຼວງດ້ວງ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການນອກໃບລາຍງານຖານະ ການເງິນ* | *31/12/2018 ພັນກີບ* | *31/12/2017 ພັນກີບ* | *31/12/2018 ທຽບເທົ່າໂດລາ* | *31/12/2017 ທຽບເທົ່າໂດລາ* |
|---|---|---|---|---|---|
| **I** | **ຄຳໝັ້ນສັນຍາ** | | | | |
| 1 | ຄຳໝັ້ນສັນຍາສະໜອງທຶນໃຫ້ກັບ ລູກຄ້າ | 1,705,000 | 1,657,200 | 200,000 | 200,000 |
| | **ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້** | **1,705,000** | **1,657,200** | **200,000** | **200,000** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | | | | |
| **A** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ ສຳລັບເງິນກູ້** | **108,892,342** | **107,686,881** | **13,141,726** | **12,996,244** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳ ລັບເງິນກູ້ໃຫ້ແກ່ລູກຄ້າ | 108,892,342 | 107,686,881 | 13,141,726 | 12,996,244 |
| **B** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ ສຳລັບໜັງສືຄ້ຳປະກັນ** | **1,705,000** | **1,657,200** | **200,000** | **200,000** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ ສຳລັບໜັງສືຄ້ຳປະກັນໃຫ້ແກ່ລູກຄ້າ | 1,705,000 | 1,657,200 | 200,000 | 200,000 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | **110,597,342** | **109,344,081** | **13,341,726** | **13,196,244** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທະນາຄານ ມາເລຍັນເບີຫັດ ສາຂາຫຼວງດ້ວງ Malayan Banking Berhad-Luangduang Branch

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

31 ມີນາ 2019

## ທະນາຄານ ເມແບັງ ສາຂານະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ*<br>*ພັນກີບ* | *ຄັງສະສົມຕາມລະບຽບການ*<br>*ພັນກີບ* | *ເງິນແຮສຳລັບກິດຈະກຳສິນເຊື່ອ*<br>*ພັນກີບ* | *ຂາດທຶນສະສົມ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2018** | **100,121,729** | **-** | **254,733** | **(508,264)** | **99,868,198** |
| ກຳໄລສຸດທິພາຍໃນປີ | - | - | - | (8,102,014) | (8,102,014) |
| ເກັບຄືນເງິນແຮຈາກເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | 17,243 | - | 17,243 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 392 | - | 392 |
| **ຍອດເຫຼືອນະວັນທີ 31 ທັນວາ 2018** | **100,121,729** | **-** | **237,882** | **(8,610,278)** | **91,749,333** |

# ທະນາຄານ ເມແບັງ ສາຂາໜອງດ້ວງ

ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ (ຕໍ່)
ສຳລັບປີສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ທຶນປະກອບ*<br>*ທຽບເທົ່າໂດລາ* | *ຄັງສະສົມຕາມລະບຽບການ*<br>*ທຽບເທົ່າໂດລາ* | *ເງິນແຮສຳລັບກິດຈະກຳສິນເຊື່ອ*<br>*ທຽບເທົ່າໂດລາ* | *ຂາດທຶນສະສົມ*<br>*ທຽບເທົ່າໂດລາ* | *ລວມ*<br>*ທຽບເທົ່າໂດລາ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2018** | **12,083,240** | **-** | **30,743** | **(61,340)** | **12,052,643** |
| ກຳໄລສຸດທິພາຍໃນປີ | - | - | - | (950,383) | (950,383) |
| ເກັບຄືນເງິນແຮຈາກເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (2,023) | - | (2,023) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | (338,756) | - | (816) | 1,720 | (337,852) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາ | **11,744,484** | **-** | **27,904** | **(1,010,003)** | **10,762,385** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທ່ານ ນາງ ແພງສີມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

31 ມີນາ 2019

## ທະນາຄານເມແບັງ ສາຂາໜອງດ້ວງ

ໃບລາຍງານກະແສເງິນສົດ
ນະວັນທີ 31 ທັນວາ 2018

| *ລາຍການ* | *ບົດ ອະທິບາຍ ເລກທີ* | *2018 ພັນກີບ* | *2017 ພັນກີບ* | *2018 ທຽບເທົ່າໂດລາ* | *2017 ທຽບເທົ່າໂດລາ* |
|---|---|---|---|---|---|
| **ກິດຈະກຳດ້ານການດຳເນີນງານ** | | | | | |
| **(ຂາດທຶນ)/ກຳໄລສຸດທິກ່ອນຫັກອາກອນ** | | **(8,102,014)** | **1,286,875** | **(950,383)** | **155,307** |
| *ດັດແກ້ສຳລັບ:* | | | | | |
| ລາຍຈ່າຍຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 1,133,299 | 1,982,226 | 132,938 | 239,226 |
| ລາຍຈ່າຍເງິນແຮສຳລັບຂາດທຶນທາງສິນເຊື່ອ | 13.2 | 8,548,300 | 48,510 | 1,002,734 | 5,854 |
| ລາຍໄດ້ດອກເບ້ຍ | | (4,306,211) | (5,360,725) | (505,127) | (646,962) |
| ຄ່າໃຊ້ຈ່າຍດອກເບ້ຍ | | 454,436 | 213,033 | 53,306 | 25,710 |
| ຂາດທຶນຈາກອັດຕາແລກປ່ຽນທີ່ເກີດຈາກການຕີມູນຄ່າຄືນໃໝ່ຂອງເງິນຕາຕ່າງປະເທດ | | 248,709 | - | 29,174 | - |
| **ກະແສເງິນສົດຈາກກິດຈະກຳການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **(2,023,481)** | **(1,830,082)** | **(237,358)** | **(220,865)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | | | | |
| ເງິນຝາກທີ່ມີກັບທະນາຄານອື່ນ | | (16,932,159) | 30,836,003 | (1,986,177) | 3,721,458 |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ | | (13,400,660) | (9,792,578) | (1,571,925) | (1,181,822) |
| ຊັບສິນອື່ນໆ | | 1,372,010 | 249,553 | 160,940 | 30,063 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ | | | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | (2,552,398) | (21,579,410) | (299,402) | (2,604,322) |
| ເງິນຝາກ ແລະ ເງິນຝາກປະເພດອື່ນໆຂອງລູກຄ້າ | | 12,408,165 | 918,033 | 1,455,503 | 114,500 |
| ໜີ້ສິນອື່ນໆ | | (1,506,794) | 216,574 | (176,752) | 22,430 |
| ດອກເບ້ຍທີ່ໄດ້ຮັບ | | 4,397,260 | 5,457,707 | 515,809 | 658,666 |
| ດອກເບ້ຍຈ່າຍ | | (240,320) | (258,687) | (28,190) | (31,220) |
| ອາກອນກຳໄລຖອກແລ້ວພາຍໃນປີ | 18 | - | - | - | - |
| **ກະແສເງິນສົດສຸດທິ(ນຳໃຊ້ໃນ)/ຈາກການດຳເນີນງານ** | | **(18,478,377)** | **4,217,113** | **(2,167,552)** | **508,888** |

# ທະນາຄານ ເມແບັງ ສາຂາໜອງດ້ວງ

ໃບລາຍງານກະແສເງິນສົດ (ຕໍ່)
ນະວັນທີ 31 ທັນວາ 2018

| *ລາຍການ* | *ບົດອະທິບາຍ ເລກທີ* | *2018 ພັນກີບ* | *2017 ພັນກີບ* | *2018 ທຽບເທົ່າໂດລາ* | *2017 ທຽບເທົ່າໂດລາ* |
|---|---|---|---|---|---|
| **ກິດຈະກຳດ້ານການລົງທຶນ** | | | | | |
| ການຊື້ຊັບສິນບັດຄົງທີ່ ແລະ ຊັບສິນບັດຄົງທີ່ ພວມກໍ່ສ້າງ | | - | (260,053) | - | (31,385) |
| ການທຳລາຍອຸປະກອນ | | 45,459 | - | 5,332 | - |
| **ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ** | | **45,459** | **(260,053)** | **5,332** | **(31,385)** |
| **ກິດຈະກຳດ້ານການເງິນ** | | | | | |
| **ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ** | | **-** | **-** | **-** | **-** |
| **ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **(18,432,919)** | **3,957,060** | **(2,162,220)** | **477,503** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | 30,920,361 | 26,963,302 | 3,731,639 | 3,297,457 |
| ຜົນກະທົບຈາກຜົດຕ່ຽງຈາກອັດຕາແລກປ່ຽນ | | - | - | (104,617) | (43,321) |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **21** | **12,487,442** | **30,920,362** | **1,464,802** | **3,731,639** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ອະນຸມັດໂດຍ:

ທະນາຄານ ມາເລຍັນເບີຫັດ ສາຂາໜອງດ້ວງ
Malayan Banking Berhad Nongduang Branch

ທ່ານ ນາງ ແພງສົມຈິດ ພົນໂພສີ
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປລາວ

31 ມີນາ 2019